- ພະແນກ ສຸຂີ ສິກ ພະນີ ຖາຍ
- PA ປະກາດ

1/4 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສໍານັກງານ ຄຄຊ
ໄດ້ຮັບ ເລກທີ...348......
ວັນທີ..01 APR 2015
ໂທລະສັບ 021 217770

ເລກທີ: 13 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 01 APR 2015

## ລາຍງານການເຄື່ອນໄຫວປະຈໍາອາທິດ
## ທີ 16/03/2015 ຫາ 20/03/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

I. **ວຽກງານການເມືອງແນວຄິດ**

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. **ວຽກງານວິຊາສະເພາະ**

1. **ສະພາບເສດຖະກິດເງິນຕາສາກົນ**

1.1 **ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຕົວເລກຜົນຜະລິດອຸດສາຫະກໍາເພີ່ມຂຶ້ນ 0,1% ໃນເດືອນ 2/2015 ບວກກັບນັກລົງທຶນເປັນຫ່ວງຕໍ່ບັນຫາໜີ້ສິນຂອງຂົງເຂດເອີຣົບ ເປັນຕົ້ນແມ່ນການແກ້ໄຂບັນຫາໜີ້ສິນຂອງເກຼັກທີ່ແກ່ຍາວ ແລະ ບໍ່ມີມາດຕະການແກ້ໄຂແບບຂາດໂຕ ແລະ ຕົວເລກທາງດ້ານເສດຖະກິດຂອງເຢຍລະມັນອອກມາບໍ່ດີ ເປັນຕົ້ນແມ່ນດຸນການຄ້າຫຼຸດລົງຈາກ 18,9 ຕື້ເອີໂຣ ໃນເດືອນ 12/2014 ເປັນ 15,9 ຕື້ເອີໂຣ ໃນເດືອນ 1/2015. ສ່ວນເງິນເຢນ ແລະ ເງິນຢວນແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາຍ້ອນດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກຂອງຍີ່ປຸ່ນເພີ່ມຂຶ້ນເປັນ 40,7 ໃນເດືອນ 2/2015 ຈາກ 39,1 ໃນເດືອນຜ່ານມາ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 10/03/2015 | ອາທິດນີ້ 16/03/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,0791 | 1,0579 | 2,00% |
| ໂດລາ/ເຢນ | 121,77 | 121,36 | 0,34% |
| ໂດລາ/ບາດ | 32,65 | 32,91 | -0,78% |
| ໂດລາ/ເປໂຊ | 44,28 | 44,47 | -0,44% |
| ໂດລາ/ຣູເປັຍ | 13069,78 | 13194,67 | -0,95% |
| ໂດລາ/ໂດລາສິງກະໂປ | 1,3852 | 1,3892 | -0,28% |
| ໂດລາ/ຢວນ | 6,2621 | 6,2533 | 0,14% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 12,64% ຈາກ 49,95 ໂດລາ/ບາເຣວ ມາເປັນ 43,63 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກຫຼຸດລົງ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດປະຈຳອາທິດທີ 6/3/2015 ເພີ່ມຂຶ້ນ 4,5 ລ້ານບາເຣວ;

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,58% ຈາກ 1.161,95 ໂດລາ/ອອນ ມາເປັນ 1.155,19 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,11% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,0003% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,88% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,68% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,62% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,25% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,66% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,92% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 25/02/2015 | | | ອາທິດນີ້ 10/03/2015 | | | % (+) ເງິນກີບແຂງ/(-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.102,29 | 8.131,32 | 8.119,45 | 8.106,97 | 8.136,87 | 8.128,71 | -0,06% | -0,07% | -0,11% |
| ບາດ | 251,01 | 252,09 | 251,61 | 248,59 | 249,80 | 249,41 | 0,97% | 0,92% | 0,88% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.113,67 | 8.148,40 | 8.131,03 | 8.113,62 | 8.148,40 | 8.131,01 | 0,001% | 0,00% | 0,0003% |
| ບາດ | 250,48 | 251,57 | 251,03 | 248,68 | 249,97 | 249,32 | 0,73% | 0,64% | 0,68% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,14% | 0,21% | 0,14% | 0,08% | 0,14% | 0,03% | | | |
| ບາດ | -0,21% | -0,21% | -0,23% | 0,03% | 0,07% | -0,03% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 0,56% ທຽບໃສ່ວັນທີ 13/03/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 45,28%.
- ປະລິມານເງິນ $M_2$ ເພີ່ມຂຶ້ນ 0,59% ເມື່ອທຽບໃສ່ວັນທີ 13/03/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 22,87%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 16/03/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 9,11 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 56,91 ລ້ານໂດລາ ແລະ ຂາຍໂດລາໄດ້ 47,80 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 843,91 ລ້ານບາດ (ໃນນີ້ ຊື້ບາດໄດ້ 441,52 ລ້ານບາດ ແລະ ຂາຍບາດໄດ້ 1.285,43 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 27,80% ແລະ ເພີ່ມຂຶ້ນ 98,06% ສຳລັບເງິນບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 13,57 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 392,85 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 6,45 ລ້ານໂດລາ ແຕ່ຂາຍບາດສຸດທິ ຈຳນວນ 180 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 20,55 ລ້ານໂດລາ ແລ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 657,55 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 10/03/2015 | | ອາທິດທີ 16/03/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 15,37 | 150,23 | 20,44 | 197,36 | 32,97% | 31,37% |
| - ທ/ຄທຸລະກິດອື່ນໆ | 24,09 | 161,96 | 36,48 | 244,16 | 51,44% | 50,76% |
| ລວມຊື້: | 39,46 | 312,19 | 56,91 | 441,52 | 44,25% | 41,43% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 13,80 | 117,45 | 23,92 | 250,85 | 73,28% | 113,57% |
| - ທ/ຄທຸລະກິດອື່ນໆ | 28,68 | 442,31 | 23,89 | 1.034,58 | -16,72% | 133,90% |
| ລວມຂາຍ: | 42,48 | 559,76 | 47,80 | 1.285,43 | 12,52% | 129,64% |
| ຊື້-ຂາຍສຸດທິ ທທກ | -3,03 | -247,57 | 9,11 | -843,91 | -400,97% | 240,87% |
| ຜິດດ່ຽງ ຊື້-ຂາຍ | -7,67 | -79,30 | 16,01 | -191,14 | 236,38% | -111,39% |
| ມູນຄ່າການຊື້-ຂາຍ | 81,94 | 871,95 | 104,72 | 1.726,95 | 27,80% | 98,06% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 1,00 | 250,00 | 15,00 | 60,00 | | |
| - ທຫລ ຂາຍໃຫ້ ທທກ | 5,25 | 95,00 | 8,55 | 240,00 | | |
| ຊື້-ຂາຍສຸດທິ ທຫລ | -4,25 | 155,00 | 6,45 | -180,00 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 2,48 | 122,28 | 13,57 | 392,85 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 15,17 | 2,51 | 0,24 | 691,55 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,10 | 0,00 | 20,79 | 34,00 | | |
| ຊື້-ຂາຍສຸດທິ ທຫລ | 15,07 | 2,51 | -20,55 | 657,55 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 03/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,17% ຫຼຸດລົງ 0,24% ຈາກ 1,41% ໃນເດືອນ 02/2015.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 35,02 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 14,6% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 384 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 34,58% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 242,88 ຕື້ກີບ ຫຼຸດລົງ 45,81% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (13-19/03/2015) ມີຈໍານວນ 1.226 ຄັ້ງ ໂດຍມີມູນຄ່າ 316,14 ຕື້ກີບ ເພີ່ມຂຶ້ນ 66,12% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 378 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.445,48 ຈຸດ ຫຼຸດລົງ 0,54% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 202.067 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,44 ຕື້ກີບ ຫຼຸດລົງ 60,55% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 67,82% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.174 ກີບ/ຮຸ້ນ ເພີ່ມຂຶ້ນ 40 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 46.643 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 334,63 ລ້ານກີບ ຫຼຸດລົງ 22,31% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 70,04% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,54%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.352 ກີບ/ຮຸ້ນ ເພີ່ມຂຶ້ນ 134 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 147.319 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,08 ຕື້ກີບ ເພີ່ມຂຶ້ນ 199,58% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 46,99% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,28%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 9.400 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,94 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.893 ກີບ/ຮຸ້ນ ຫຼຸດລົງ 92,16 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 8.005 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 31,16 ລ້ານກີບ ຫຼຸດລົງ 71,87% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 23,41% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,73%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການເປີດກອງປະຊຸມປຶກສາຫາລືກ່ຽວກັບການຕີມູນຄ່າທາງບັນຊີຕໍ່ບ້ວງລົງທຶນເງິນສົດສະກຸນເອີໂຣ ຮ່ວມກັບກົມນະໂຍບາຍ, ກົມບັນຊີ-ການເງິນ ແລະ ກົມໄອທີ;
- ສໍາເລັດການຈັດກອງປະຊຸມປຶກສາຫາລືກ່ຽວກັບຮ່າງອອກບົດແນະນໍາການຈັດຕັ້ງປະຕິບັດການດໍາເນີນຕະຫຼາດເປີດຮ່ວມກັບກົມກ່ຽວຂ້ອງຂອງ ທຫລ;
- ສໍາເລັດການເຂົ້າຮ່ວມກອງປະຊຸມ ແລະ ຝຶກອົບຮົມ: ❶ ກອງປະຊຸມສໍາມະນາກ່ຽວກັບ Risk Management workshop ທີ່ໂຮງແຮມ ດອນຈັນ, ❷ ກອງປະຊຸມປຶກສາຫາລືກ່ຽວກັບ ບໍລິສັດ ແມັກສຄີສະເຕໂບ ບີເວີອາຍ ທີ່ກະຊວງປ້ອງກັນຄວາມສະຫງົບ, ❸ ກອງປະຊຸມສໍາມະນາວິຊາການ ເພື່ອລະດົມຄວາມເຫັນກ່ຽວກັບບົດຮຽນການພັດທະນາ

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;
[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;
[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;
[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

ສະຫະກອນຂອງ ຕ່າງປະເທດ ເພື່ອສົມທຽບ ແລະ ຄົ້ນຄວ້າຮູບແບບທີ່ເໝາະສົມສໍາລັບປະເທດລາວ ທີ່ສູນຝຶກອົບຮົມບ້ານເກີນ ເມືອງທຸລະຄົມ ແຂວງວຽງຈັນ, ❹ ກອງປະຊຸມຜ່ານຮ່າງດໍາລັດວ່າດ້ວຍການປົກປ້ອງເງິນຝາກ ທີ່ໂຮງແຮມລາວພາຊາ;

- ສໍາເລັດການເປີດກອງປະຊຸມປັບປຸງປື້ມແປງພາຍໃນພັກ ຢູ່ອົງຄະນະພັກ ທະນາຄານແຫ່ງ ສປປ ລາວ ທີ່ຫ້ອງປະຊຸມໃຫຍ່ສະໂມສອນສະຖາບັນການທະນາຄານ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈໍານວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າ ຮ່າງລະບຽບກ່ຽວກັບການຍຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ຄົ້ນຄວ້າການເພີ່ມສະຖາບັນການເງິນຈຸລະພາກ ເຂົ້າໃນບົດບັນທຶກຄວາມເຂົ້າໃຈ ແລະ ປຶກສາຫາລືລະຫວ່າງກົມຄຸ້ມຄອງສະຖາບັນການເງິນ ແລະ CARD ກ່ຽວກັບ MOU ເພື່ອຮ່າງເປັນການຕົກລົງໃຫ້ການຊ່ວຍເຫຼືອ Term of Agreement (TA), ❹ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານຕາມຫຼັກການ ບາເຊວ 2;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ພາສີ ພິມມະກອນ